# ແມງແຄງພິຄາດ Stink bug ( *Eocanthecona furcellata*)

## ປະຫວັດຄວາມເປັນມາ ແລະ ຄວາມສຳຄັນ

ແມງແຄງພິຄາດ ຫຼື ໂຕຫ້ຳ (ແມງກິນແມງ) ທີ່ມີບົດບາດສຳຄັນໃນການຄວບຄຸມ ແລະ ກຳຈັດບົ້ງຝູງສາລີ (ໂດຍສະເພາະໃນໄລຍະທີ່ຍັງເປັນໂຕບົ້ງ) ທີ່ເປັນສັດຕູພືດຮ້າຍແຮງຂອງສາລີ ຂໍ້ດີຂອງການນຳໃຊ້ແມງແຄງພິຄາດແມ່ນຄວາມຈຳເພາະເຈາະຈົງໃນການກິນບົ້ງຈຶ່ງບໍ່ທຳລາຍແມງໄມ້ທີ່ເປັນປະໂຫຍດຊະນິດອື່ນໆ ເຊັ່ນ: ແຕນບຽນ, ໂຕຫ້ຳຊະນິດອື່ນ, ແມງໄມ້ປະສົມເກສອນ ເປັນອີກໜຶ່ງທາງເລືອກສຳລັບການກຳຈັດບົ້ງຝູງທີ່ຕ້ານທານຕໍ່ສານເຄມີ (ດື້ຢາ) ສາມາດເວົ້າໄດ້ວ່າເປັນທາງເລືອກທີ່ຂ້ອນຂ້າງປອດໄພຕໍ່ສິ່ງແວດລ້ອມ ແລະ ຊາວກະສິກອນຜູ້ປູກສາລີນັ້ນເອງ .

## ອຸປະກອນໃນການລ້ຽງແມງແຄງພິຄາດ

1. ກ່ອງຢາງແບບໃສ (ເຈາະປ່ອງ ແລະ ໃສ່ຕາໜ່າງຖີ່)
2. ສຳລີ (ສາລັບໃຫ້ນ້ຳແມງແຄງພິຄາດ)
3. ຟອຍຂະໜາດນ້ອຍ, ມີດຕັດ, ຄັດເຕີ້...
4. ອາຫານລ້ຽງຄື ໜອນນົກ ຊະນິດ *Zophobas morio* Fabricius
5. ໂຕ໊ະວາງກ່ອງລ້ຽງ
6. ໃບໄມ້ຈິງ ຫຼື ແບບປອມກໍ່ໄດ້ (ເປັນບ່ອນລີ້ອາໃສຂອງແມງແຄງພິຄາດ)
7. ຫ້ອງລ້ຽງ (ທີ່ສາມາດຄວບຄຸມອຸ່ນນະພູມໄດ້ດີ)



ຮູບພາບ: ໂຕແກ່ເຕັມໄວຂອງແມງແຄງພິຄາດ, ລັກສະນະການກິນໜອນນົກ ແລະ ການປະສົມພັນກ່ອນວາງໄຂ່

## ວົງຈອນຊີວິດໃນແຕ່ລະໄລຍະ




ຮູບພາບ: ວົງຈອນຊີວິດຂອງແມງແຄງພິຄາດ

## ສະຫຼຸບຂັ້ນຕອນວິທີການລ້ຽງ

- ໃສ່ແມງພິຄາດ 2-3 ໂຕ ໃນກ່ອງ ແລະ ໃສ່ໜອນນົກ 1-2 ໂຕ ← ປ່ຽນໂຕໜອນນົກເມື່ອເຫັນວ່າມີສີດຳ ແລະ ແຫ້ງຫ່ຽວ ພ້ອມທັງອະນາໄມກ່ອງລ້ຽງ
- ↓ ເມື່ອແມງພິຄາດວາງໄຂ່ ໃຫ້ແຍກພໍ່ແມ່ພັນອອກ → ເພື່ອໃຫ້ແມງແຄງປະສົມພັນ ແລະ ວາງໄຂ່ຕໍ່ໃນຊຸດຖັດໄປ
- ↓ ໄລຍະທີ 1-2 ແມງແຄງຈະຍັງບໍ່ທັນກິນອາຫານ ← ດູແລດ້ວຍການໃຊ້ສຳລີຈຸບນ້ຳໃຫ້ແມງແຄງດູດກິນ
- ↓ ໄລຍະທີ 3 ແມງແຄງກິນໜອນນົກຈຳນວນຫຼາຍ ແລະ ແຂງແຮງຊອກລ້າເຫຍື່ອໄດ້ເກັ່ງ ແລະ ໄວ → ເໝາະໃນການນຳໄປປ່ອຍໃນພື້ນທີ່ມີບົ້ງຝູງສາລີລະບາດໜັກໃຫ້ປ່ອຍ ໃນຈຳນວນ 2,000ໂຕ/ໄລ່
- ໄລຍະທີ 4-5 ກິນອາຫານເພີ່ມຂຶ້ນເລື່ອຍໆ ← ຄວນໃຫ້ອາຫານພຽງພໍ ເພາະຖ້າອາຫານບໍ່ພໍແມງແຄງພິຄາດຈະດູດກິນກັນເອງເພື່ອຄວາມຢູ່ລອດ
- ↓ ເປັນໄລຍະໂຕແກ່ເຕັມໄວ ປ່ຽນໃສ່ກ່ອງໃໝ່ ເພື່ອການຂະຫາຍພັນຕໍ່ໄປ

**ສູນປ້ອງກັນພືດ, ກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້**

ກມ13 ຖະໜົນທ່າເດື່ອ ບ. ນາໄຫ ມ. ຫາດຊາຍຟອງ ນະຄອນຫຼວງວຽງຈັນ
ເບີໂທ ແລະ ແຟັກ: +856 21 818 164

ເອກະສານອ້າງອີງ:
- ບົດລາຍງານ ໜ່ວຍງານແມງໄມ້ ສູນປ້ອງກັນພືດ, ກັນຍາ 2019.